ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 32 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 07 ສິງຫາ 2019

ສຳນັກງານ ຄຄຊ
ເລກທີ...0788...
ວັນທີ...07 AUG 2019...
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 22-26/07/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,89% ເມື່ອທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດ ສ. ອາເມຣິກາອອກມາດີ ເຫັນໄດ້ຈາກຕົວເລກຍອດສັ່ງຊື້ສິນຄ້າຄົງທົນ ປະຈຳເດືອນ 06/2019 ເພີ່ມຂຶ້ນ 2,00% ຈາກຫຼຸດລົງ 2,30% ໃນເດືອນຜ່ານມາ ແລະ ຍອດຂາຍບ້ານໃໝ່ເພີ່ມຂຶ້ນ 7,00% ຈາກຫຼຸດລົງ 8,20% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 15-19/07/2019 | ອາທິດນີ້ 22-26/07/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1241 | 1,1142 | 0,89% |
| ເຢນ/ໂດລາ | 107,63 | 108,64 | -0,93% |
| ບາດ/ໂດລາ | 30,790 | 30,920 | -0,42% |
| ເປໂຊ/ໂດລາ | 51,07 | 51,10 | -0,05% |
| ຣູເປັຍ/ໂດລາ | 13.940,00 | 14.009,00 | -0,49% |
| ໂດລາສິງກະໂປ/ໂດລາ | 1,3588 | 1,3687 | -0,72% |
| ຢວນ/ໂດລາ | 6,8795 | 6,8794 | 0,00% |

**1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ**

- ລາຄານ້ຳມັນ ເພີ່ມຂຶ້ນ 0,52% ຈາກ 56.10 ໂດລາ/ບາເຣວ ມາເປັນ 56.39 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການນ້ຳມັນສູງກ່ວາການສະໜອງນ້ຳມັນ ເຫັນໄດ້ຈາກຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາ ຫຼຸດລົງ 10,84 ລ້ານບາເຣວ ຈາກຫຼຸດລົງ 3,12 ລ້ານບາເຣວ ໃນອາທິດຜ່ານມາ;
- ລາຄາຄຳ ຫຼຸດລົງ 1.46% ຈາກ 1,440.51 ໂດລາ/ອອນ ມາເປັນ 1,419.43 ໂດລາ/ອອນ ເນື່ອງຈາກເງິນໂດລາແຂງຄ່າ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ.

**2. ສະພາບເງິນຕາພາຍໃນ**

**2.1 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 07/2019 ຄາດວ່າຈະຢູ່ໃນລະດັບ 2,80%.

**2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2**

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,004% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 15,20%.;
- ປະລິມານເງິນ M2 ເພີ່ມຂຶ້ນ 0,17% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ ເພີ່ມຂຶ້ນ 10,14%.

**2.3 ສະພາບອັດຕາແລກປ່ຽນພາຍໃນ**

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,35% ແຕ່ແຂງຄ່າຂຶ້ນ 0,35% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 2,02% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 7,11% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 15-19/07/2019 | | | ອາທິດນີ້ 22-26/07/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.750,22 | 8.774,99 | 8.761,37 | 8.777,14 | 8.808,16 | 8.792,15 | -0,31% | -0,38% | -0,35% | -2,00% | -2,05% | -2,02% |
| ບາດ | 287,22 | 289,34 | 288,45 | 286,49 | 288,51 | 287,43 | 0,25% | 0,29% | 0,35% | -7,08% | -7,29% | -7,11% |

**2.4 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ**

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (19-25/07/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ຊື້ເງິນໂດລາສຸດທິ 15,35 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 31,38 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 16,03 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 215,05 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 125,45 ລ້ານບາດ ແລະ ຂາຍເງິນບາດໄດ້ 340,50 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດ ເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 21,42% ແລະ ເງິນບາດຫຼຸດລົງ 3,26%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ບໍ່ມີການເຄື່ອນໄຫວ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ບໍ່ມີການເຄື່ອນໄຫວ;

[1]% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ທຫລ ໄດ້ດັດສົມໂດຍການຂາຍເງິນໂດລາ ຈຳນວນ 100,64 ລ້ານໂດລາ.

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດກ່ອນ 15-19/07/2019 | | ອາທິດນີ້ 19-25/07/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **32,01** | **191,39** | **31,38** | **125,45** | **-1,97%** | **-34,45%** |
| - ທ/ຄທຸລະກິດລັດ | 7,52 | 114,21 | 13,32 | 34,07 | 77,13% | -70,17% |
| - ທ/ຄທຸລະກິດອື່ນໆ | 24,49 | 77,18 | 18,06 | 91,38 | -26,26% | 18,40% |
| **2. ການຂາຍເງິນຕາຕ່າງປະເທດ** | **28,32** | **290,26** | **16,03** | **340,50** | **-43,40%** | **17,31%** |
| - ທ/ຄທຸລະກິດລັດ | 9,17 | 93,25 | 4,73 | 52,24 | -48,42% | -43,98% |
| - ທ/ຄທຸລະກິດອື່ນໆ | 19,15 | 197,01 | 11,30 | 288,26 | -40,99% | 46,32% |
| **ຊື້-ຂາຍສຸດທິ ທທກ** | **3,69** | **-98,87** | **15,35** | **-215,05** | **315,99%** | **117,51%** |
| - ຜົດດ່ຽງຊື້-ຂາຍ | 11,53% | -51,66% | 48,92% | -171,42% | 324,25% | 231,83% |
| **- ມູນຄ່າການຊື້-ຂາຍ** | **60,33** | **481,65** | **47,41** | **465,95** | **-21,42%** | **-3,26%** |
| **3. ການຊື້-ຂາຍລະຫວ່າງ ທຫລກັບ ທທກ** | **0,00** | **0,00** | **0,00** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 0,00 | 0,00 | 0,00 | 0,00 | | |
| **4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **1,70** | **5,00** | **0,00** | **0,00** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **-100,64** | **0,00** | **-100,64** | **0,00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 100,64 | 0,00 | 100,64 | 0,00 | | |

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼເຂົ້າສຸດທິ ຜ່ານລະບົບທະນາຄານປະຈຳອາທິດວັນທີ (19-25/07/2019) ຈຳນວນ 6,36 ລ້ານໂດລາ. ໃນນັ້ນ, ກະແສເງິນໄຫຼເຂົ້າມີຈຳນວນ 149,88 ລ້ານໂດລາ (ສ່ວນໃຫຍ່ແມ່ນຮັບຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 49,76 ລ້ານໂດລາ, ຮັບເງິນລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 23,44 ລ້ານໂດລາ ແລະ ຖອນເງິນຝາກຈາກສະຖາບັນການເງິນຢູ່ຕ່າງປະເທດ ຈຳນວນ 51,60 ລ້ານໂດລາ). ສ່ວນກະແສເງິນໄຫຼອອກ ຈຳນວນ 143,52 ລ້ານໂດລາ (ສ່ວນໃຫຍ່ແມ່ນແມ່ນຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 72,59 ລ້ານໂດລາສະຫະລັດ, ລາຍຈ່າຍອື່ນໆ ຈຳນວນ 8,20 ລ້ານໂດລາສະຫະລັດ ແລະ ຖອນເງິນ ຫຼື ໂອນເງິນໄປຝາກຢູ່ຕ່າງປະເທດ ຈຳນວນ 51,61 ລ້ານໂດລາ).

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 426 ສະບັບ ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 163 ສະບັບ, ລວມມູນຄ່າໂອນທັງໝົດ 483,82 ຕື້ກີບ, ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 165,94 ຕື້ກີບເທົ່າກັບ 52,20%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (22-26/07/2019) ມີທັງໝົດ 3.550 ຄັ້ງ ຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ມີທັງໝົດ 1.139,22 ຕື້ກີບ ທຽບໃສ່ອາທິດຜ່ານ

ມາເຫັນວ່າ ເພີ່ມຂຶ້ນ 61,61 ຕື້ກີບ ຫຼື ເທົ່າກັບ 5,71%. ໃນນັ້ນ, ກະຊວງການເງິນມີການໂອນເງິນຈຳນວນ 80 ຄັ້ງ, ລວມມູນຄ່າໂອນທັງໝົດ 153,11 ຕື້ກີບ ເມື່ອທຽບໃສ່ອາທິດ ຜ່ານມາ ເຫັນວ່າ ເພີ່ມຂຶ້ນ ເປັນຈຳນວນເງິນ 6,04 ຕື້ກີບ ກວມເອົາ 4,11%.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 763,21 ຈຸດ ຫຼຸດລົງ ຈາກ 776,80 ຈຸດ ຫຼື ເທົ່າກັບ 1,75% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 711.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,97 ຕື້ກີບ ເພີ່ມຂຶ້ນ 162,28% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ 25,84% ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ PCD ແລະ EDL-GEN.

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

| ບໍລິສັດ | ອາທິດກ່ອນ (12- 18 ກໍລະກົດ 2019) | | | ອາທິດນີ້ (19-25 ກໍລະກົດ 2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາ ປ່ຽນແປງ (%) |
| **BCEL** | 40.300 | 237.460.000 | 5.950 | **199.800** | **1.164.575.000** | **5.950** | 395,78 | 390,43 | - |
| **EDL-GEN** | 24.700 | 92.023.000 | 3.780 | **94.100** | **354.527.000** | **3.700** | 280,97 | 285,26 | -2,12 |
| **LWPC** | - | - | 7,150 | - | - | **7.150** | - | - | - |
| **PTL** | 8.500 | 4.145.000 | 500 | **5.100** | **2.550.000** | **500** | -40 | -38,48 | - |
| **SVN** | - | - | 2.100 | - | - | **2.100** | - | - | - |
| **PCD** | - | - | 1.000 | - | - | **950** | - | - | -5,00 |
| **LCC** | 122.600 | 269.720.000 | 2.200 | - | - | **2.200** | -100 | -100 | - |
| **MHTL** | 15.000 | 44.115.000 | 2.950 | **12.200** | **35.940.000** | **2.950** | -18,67 | -18,53 | - |
| **LAT** | - | - | 750 | - | - | **750** | - | - | - |
| **VCL** | 101.400 | 106.540.000 | 1.050 | **400.000** | **420.000.000** | **1.050** | 294,48 | 294,22 | - |
| ທັງໝົດ | 312.500 | 754.003.000 | | **711.200** | **1.977.592.000** | | 127,58 | 162,28 | |

5. ວຽກງານອື່ນໆທີ່ພົ້ນເດັ່ນ.

- ທຫລ ໄດ້ຮ່ວມກອງປະຊຸມ ແລະ ປຶກສາຫາລືວຽກງານທີ່ຈຳເປັນຈຳນວນໜຶ່ງເປັນຕົ້ນ: ❶ໄປເຄື່ອນໄຫວທັດສະນະສຶກສາ ແລະ ຢ້ຽມຢາມທະນາຄານເພື່ອການກະເສດ ແລະ ສະຫະກອນການກະເສດ ຢູ່ປະເທດໄທ; ❷ກອງປະຊຸມຝຶກອົບຮົມໃນຫົວຂໍ້: “Capital Market Academy Greater Mekong Subregion (CMA-GMS) for Executive Education Program 2019” ຢູ່ປະເທດໄທ; ❸ກອງປະຊຸມສຳມະນາກ່ຽວກັບ Product Symposium ຢູ່ປະເທດສິງກະໂປ; ❹ກອງປະຊຸມສຳມະນາພາຍໃຕ້ຫົວຂໍ້: “2019 Wells Fargo Risk Management and Compliance” ແລະ ❺ກອງປະຊຸມສຳມະນາກ່ຽວກັບລະບຽບກົດໝາຍຂອງການອອກໃບອະນຸຍາດ ແລະ ຄຸ້ມຄອງບັນດາບໍລິສັດທຸລະກິດການບໍລິການເງິນເອເລັກໂຕຣນິກຢູ່ປະເທດ ຖານສະເປນ. ພ້ອມນັ້ນ, ທຫລ ກໍ່ໄດ້ໄປຢ້ຽມຊົມຫໍມູນເຊື້ອປະທານສະຫະພັນແມ່ຍິງລາວເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງອົງການຈັດຕັ້ງແມ່ຍິງລາວ ແລະ ຢ້ຽມຊົມອານຸສອນ

ຂອງປະທານສຸພານຸວົງເນື່ອງໃນໂອກາດຂໍ່ານັບຮັບຕ້ອນ ແລະ ສະເຫຼີມສະຫຼອງວັນຄ້າຍວັນເກີດປະທານສຸພານຸວົງຄົບຮອບ 110 ປີ.

- ທຫລ ໄດ້ຈັດກອງປະຊຸມພາຍໃນ ເພື່ອປຶກສາຫາລືທາງດ້ານວິຊາການທີ່ສຳຄັນ ແລະ ວຽກງານປິ່ນອ້ອມຈຳນວນໜຶ່ງເປັນຕົ້ນ: ❶ກອງປະຊຸມປຶກສາຫາລືຄົ້ນຄວ້າວຽກງານອັດຕາແລກປ່ຽນ; ❷ກອງປະຊຸມວຽກງານນະໂຍບາຍສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs); ❸ກອງປະຊຸມທາບທາມຄຳເຫັນຕໍ່ຮ່າງດຳລັດວ່າດ້ວຍການເງິນ ແລະ ການບັນຊີຂອງ ທຫລ; ❹ກອງປະຊຸມສຳມະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນຢູ່ແຂວງສະຫວັນນະເຂດ ແລະ ❺ພິທີປະຖະກະຖາເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງອົງການຈັດຕັ້ງສະຫະພັນແມ່ຍິງລາວຄົບຮອບ 64 ປີ.
- **ທຫລ ໄດ້ສຳເລັດວຽກງານວິຊາສະເພາະທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ສຳເລັດການລົງກວດກາສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກຈຳນວນ 03 ແຫ່ງເຊັ່ນ: ສະຫວັນຄາ, ແອວແອນແອວ ແລະ ໄຊທານີ; ❷ ລົງກວດກາ ແລະ ຝຶກອົບຮົມວຽກງານຂໍ້ມູນຂ່າວສານສິນເຊື່ອໃຫ້ແກ່ສະມາຊິກ 05 ແຫ່ງ ແລະ ສະຖາບັນການເງິນທີ່ສະໝັກເຂົ້າເປັນສະມາຊິກໃໝ່ 03 ແຫ່ງຢູ່ພາກໃຕ້ແຂວງຈຳປາສັກ, ສາລະວັນ ແລະ ເຊກອງ; ❸ລົງກວດກາຄວາມພ້ອມຂອງບໍລິສັດປະເມີນມູນຄ່າຊັບສິນ 01 ແຫ່ງຕິດພັນກັບການສະເໜີຂໍຮັບຮອງເປັນບໍລິສັດປະເມີນມູນຄ່າຊັບສິນໃນວຽກງານຫຼັກຊັບ ແລະ ❹ລົງກວດກາທະນາຄານນະໂຍບາຍ ແລະ ທະນາຄານບູຍອງລາວຈຳກັດຕາມແຜນປະຈຳປີ 2019.
- **ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ**ຄະນະນຳຈາກທະນາຄານແຫ່ງລັດ ສສ. ຫວຽດນາມ.

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ.
- **ທຫລ ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກ ເພື່ອປຶກສາຫາລືວຽກງານທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ກອງປະຊຸມຂົງເຂດພາກພື້ນ ເພື່ອກະກຽມໃຫ້ແກ່ກອງປະຊຸມສຸດຍອດລະດັບພາກພື້ນ ເພື່ອຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ປະເທດ ມາເລເຊຍ.
- **ທຫລ ກະກຽມຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆເປັນຕົ້ນ:** ❶ກອງປະຊຸມເຜີຍແຜ່-ເຊື່ອມຊຶມ ມະຕິກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກ ຄັ້ງທີ 8 ສະໄໝທີ X ຕິດພັນກັບການໂຄສະນາ-ເຜີຍແຜ່ເອກະສານສຳຄັນຂອງຂັ້ນເທິງ ແລະ ພິທີມອບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ; ❷ກອງປະຊຸມພົບປະຮ່ວມກັບຄະນະກວດກາສູນກາງຊາວໜຸ່ມ; ❸ກອງປະຊຸມວຽກນະໂຍບາຍສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ກັບທະນາຄານທຸລະກິດ; ❹ກອງປະຊຸມສຳມະນາພາຍໃຕ້ຫົວຂໍ້: "ການຖອດຖອນບົດຮຽນກ່ຽວກັບການປະເມີນມູນຄ່າຊັບສິນ" ແລະ ❺ກະກຽມຈັດຝຶກອົບຮົມໃນຫົວຂໍ້: "ການບັນຊີທະນາຄານ".
- **ທຫລ ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ**ຄະນະໂຮງພິມ ສສ ຫວຽດນາມ, ທະນາຄານແຫ່ງລັດ ສສ. ຫວຽດນາມ.

ເຊັນແທນຫົວໜ້າຫ້ອງການ
ຮອງຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ພູມມະລີ ສີຣິພົນເດດ